ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການກະຊວງ

ເລກທີ 917 /ຫກຊ
ນະຄອນຫຼວງວຽງຈັນ, ວັນທີ 26 ເມສາ 2019

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ.

**ເລື່ອງ:** ການນຳເຂົ້າ ແລະ ຈຳໜ່າຍຊຸດອຸປະກອນ ຮັບສັນຍານໂທລະພາບ ຜ່ານດາວທຽມຂອງຕ່າງປະເທດ.

- ອີງຕາມແຈ້ງການຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1989/ຫສນຍ.ກຄສ, ລົງວັນທີ 14 ທັນວາ 2017;
- ອີງຕາມແຈ້ງການຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 578/ຫສນຍ, ລົງວັນທີ 03 ເມສາ 2019;
- ອີງຕາມຕາມຂໍ້ຕົກລົງ ວ່າດ້ວຍການ ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໄອຊີທີ (ICT) ສະບັບເລກທີ 2118/ປທສ, ລົງວັນທີ 18 ສິງຫາ 2018;
- ອີງຕາມລະບຽບການກ່ຽວກັບການກວດກາ ແລະ ຢັ້ງຢືນ ມາດຕະຖານເຕັກນິກອຸປະກອນ ຮັບສັນຍານໂທລະພາບຜ່ານດາວທຽມ ສະບັບເລກທີ 0492/ກຄຖ, ລົງວັນທີ 19 ເມສາ 2018;

ຫ້ອງການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດດ້ານການຈຳໜ່າຍ ຫຼື ນຳເຂົ້າຊຸດອຸປະກອນ ຮັບສັນຍານໂທລະພາບຜ່ານດາວທຽມຂອງຕ່າງປະເທດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ເປັນຕົວແທນຈຳໜ່າຍ ຫຼື ນຳເຂົ້າອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມຂອງຕ່າງປະເທດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຂໍອະນຸຍາດດຳເນີນກິດຈະການນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດເປັນຕົວແທນຢ່າງຖືກຕ້ອງນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີຈຸດປະສົງນຳເຂົ້າ ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມຂອງຕ່າງປະເທດ ທຸກຄັ້ງກ່ອນນຳເຂົ້າ ຕ້ອງນຳເອົາອຸປະກອນຄືນຊຸດມາຜ່ານການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກອຸປະກອນໂດຍ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເສຍກ່ອນ.

ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດແຈ້ງການສະບັບນີ້ ຈະຖືກນຳໃຊ້ມາດຕະການເດັດຂາດຕໍ່ຜູ້ລະເມີດ ໂດຍຍຶດເຄື່ອງທີ່ນຳເຂົ້າມາຢ່າງບໍ່ຖືກຕ້ອງ ຕາມລະບຽບການນັ້ນ ໄວ້ເປັນຂອງລັດ ແລະ ປັບໃໝຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮ.ກ. ຫົວໜ້າຫ້ອງການ

ອະລະໄຊ ດາລາລອຍ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ,0100 ຖະໜົນລ້ານຊ້າງ, ບ້ານສີສະເກດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ:+856 21219858 ແຟັກ: +856 21219575